ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----ooo◇◇◇ooo-----

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0051 /ກປ.

ນະຄອນຫຼວງ ວຽງຈັນ, ວັນທີ 20 APR 2009

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ການຟື້ນຟູປ່າໄມ້

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ສະບັບເລກທີ 148/ນຍ, ລົງວັນທີ 10 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ກະຊວງກະສິກຳ ແລະ ປ່າໄມ້.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

ມາດຕາ 1. ຫຼັກການລວມ

ຂໍ້ຕົກລົງ ສະບັບນີ້ ໄດ້ກຳນົດຈຸດປະສົງ, ລະດັບຄາດໝາຍ ແລະ ຫລັກການລວມ ກ່ຽວກັບ ການປົກປັກຮັກສາ, ການພັດທະນາ ແລະ ຟື້ນຟູບູລະນະປ່າໄມ້ຊຸດໂຊມ ແລະ ທີ່ດິນປ່າປອກໂຫລ້ນ ໃນຂອບເຂດ ທົ່ວປະເທດ, ເພື່ອເຮັດໃຫ້ປ່າໄມ້ ທີ່ໄດ້ຖືກທຳລາຍໃນໄລຍະຜ່ານມາ ກັບກາຍມາເປັນປ່າໄມ້ທຳມະຊາດ ທີ່ອຸດົມສົມບູນຄືນໃໝ່. ສາມາດຮັບໃຊ້ໃຫ້ແກ່ການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ ຢ່າງຍືນນານ ທັງເປັນການປົກປັກຮັກສາສິ່ງແວດລ້ອມທຳມະຊາດ.

ມາດຕາ 2. ຈຸດປະສົງ

1. ເພື່ອເຮັດໃຫ້ ຊັບພະຍາກອນປ່າໄມ້ ທີ່ມີໃນປະຈຸບັນ ໄດ້ຮັບການຄຸ້ມຄອງ ປົກປັກຮັກສາ, ຟື້ນຟູ ແລະ ປູກປ່າ ດ້ວຍການຟື້ນຟູບູລະນະ ເຂດປ່າໄມ້ເຊື່ອມໂຊມ ແລະ ທີ່ດິນປ່າປອກໂຫລ້ນ ໃຫ້ອຸດົມສົມບູນຮັ່ງມີຂຶ້ນ ແລະ ນຳໃຊ້ ຢ່າງຍືນນານ .
2. ເພື່ອເຮັດໃຫ້ການຟື້ນຟູປ່າໄມ້ທຳມະຊາດ ທີ່ຖືກທຳລາຍ ດ້ວຍການຖາງປ່າເຮັດໄຮ່, ໄຟໄໝ້ລາມປ່າ ແລະ ການຂຸດຄົ້ນໄມ້ຢ່າງຕໍ່ເນື່ອງ ໃນໄລຍະຜ່ານມາໃຫ້ກັບກາຍເປັນປ່າດົງຄືນໃໝ່ ທີ່ປະກອບ ດ້ວຍຊະນິດພັນໄມ້ ທີ່ມີຄຸນຄ່າດ້ານເສດຖະກິດ, ປ່າຍອດນ້ຳ, ປ່າແຫລ່ງນ້ຳ, ດິນ, ຖິ່ນທີ່ຢູ່ອາໄສ ຂອງສັດປ່າ, ຮັກສາສິ່ງແວດລ້ອມ, ປ້ອງກັນການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ;

3. ເພື່ອກຳນົດຂອບເຂດ, ປັກຫລັກໝາຍ, ສຳຫລວດຈັດສັນເນື້ອທີ່ ແລະ ສ້າງແລວປ້ອງກັນໄຟປ່າ ໃນເຂດພື້ນຟູປ່າ;
4. ເພື່ອປົກປັກຮັກສາ ແຫຼ່ງແກ່ນພັນໄມ້ພື້ນເມືອງ, ຍົກສູງຄຸນນະພາບແກ່ນພັນໄມ້ ແລະ ປັບປຸງ ລະບົບແຫຼ່ງແກ່ນພັນໄມ້ພື້ນເມືອງ;
5. ~~ເພື່ອເປັນການກະຕຸກຊຸກຍູ້ ແລະ ສົ່ງເສີມໃຫ້ມີການປະກອບສ່ວນ ຂອງບຸກຄົນ, ຄອບຄົວ ແລະ ການຈັດ~~ຕັ້ງ ປະກອບສ່ວນເຂົ້າໃນການພື້ນຟູປ່າໄມ້ ຢ່າງຕັ້ງໜ້າ.

ມາດຕາ 3. ລະດັບຄາດໝາຍ

1. ປົກປັກຮັກສາ ເນື້ອທີ່ປ່າໄມ້ ທີ່ມີຢູ່ໃນປະຈຸບັນ ພ້ອມທັງເຮັດໃຫ້ເນື້ອທີ່ປ່າໄມ້ ເພີ່ມຂຶ້ນເປັນລຳດັບດ້ວຍການພື້ນຟູປ່າໄມ້ ແລະ ປູກປ່າໃຫ້ມີເນື້ອທີ່ຄວາມປົກຫຸ້ມປ່າໄມ້ໄດ້ 70%ຂອງເນື້ອທີ່ ທົ່ວປະເທດ ໃນປີ 2020;
2. ຈັດຕັ້ງປະຕິບັດບັນດານິຕິກຳ ໂດຍສະເພາະກົດໝາຍ,ດຳລັດ, ຂໍ້ກຳນົດ, ກົດລະບຽບ, ຄຳສັ່ງ, ຄຳແນະນຳ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງກັບປ່າໄມ້ ໃນການຄຸ້ມຄອງຊັບພະຍາກອນປ່າໄມ້ ຢ່າງມີປະສິດທິຜົນ;
3. ຮັກສາໄດ້ຊັບພະຍາກອນປ່າໄມ້ອັນລ້ຳຄ່າ ເພື່ອພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ປ້ອງກັນ ການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ, ປົກປັກຮັກສາປ່າຍອດນ້ຳ, ປ່າແຫຼ່ງນ້ຳ, ຄວາມອຸດົມສົມບູນ ທາງດ້ານຊີວະນາໆພັນຖິ່ນທີ່ຢູ່ອາໄສຂອງສັດປ່າ, ສິ່ງແວດລ້ອມ ແລະ ເປັນການຮອງຮັບ ໃຫ້ແກ່ຕະຫລາດ ກາກບອນ;
4. ເຂດພື້ນຟູປ່າໄມ້ທຳມະຊາດ ໄດ້ຮັບການກຳນົດຂອບເຂດ ແລະ ປັກຫລັກໝາຍ ຢ່າງຈະແຈ້ງ;
5. ຄຸ້ມຄອງ, ນຳໃຊ້ ແລະ ຂະຫຍາຍ ແຫລ່ງແກ່ນພັນໄມ້ພື້ນເມືອງຂອງລາວ ຢ່າງມີປະສິດທິຜົນ ແລະ ຍືນນານ.

ມາດຕາ 4. ນິຍາມ

ການພື້ນຟູປ່າໄມ້ ແມ່ນການພັດທະນາ ປ່າໄມ້ທີ່ຊຸດໂຊມ, ທີ່ດິນປ່າໄມ້ ແລະ ທີ່ດິນປ່າປອກໂຫຼ້ນ ໃຫ້ກາຍເປັນປ່າທີ່ອຸດົມສົມບູນຄືນໃໝ່ ໂດຍນຳໃຊ້ເຕັກນິກວິຊາການ ທີ່ຖືກຕ້ອງ ແລະ ເໝາະສົມ.

ມາດຕາ 5. ອະທິບາຍສັບ

1. ເຂດພື້ນຟູປ່າໄມ້ ໝາຍເຖິງເຂດເນື້ອທີ່ປ່າໄມ້ ທີ່ມີຄວາມປົກຫຸ້ມຂອງປ່າໄມ້ ແຕ່ 20% ລົງມາ, ເຂດເນື້ອທີ່ປ່າໄມ້ທີ່ມີສະພາບເປັນປ່າເຫລົ່າ ຫລື ປ່າຊຸດໂຊມ, ທີ່ດິນປ່າປອກໂຫຼ້ນ ໃນຂອບເຂດທົ່ວປະເທດ ທີ່ຖືກກຳນົດໄວ້ເພື່ອພື້ນຟູໃຫ້ກາຍເປັນປ່າໄມ້ທີ່ອຸດົມສົມບູນຄືນໃໝ່;
2. ຄວາມປົກຫຸ້ມຂອງປ່າໄມ້ 20% ລົງມາ ໝາຍເຖິງການປະເມີນຄວາມປົກຫຸ້ມ ຂອງຕົ້ນໄມ້ ທີ່ມີຄວາມສູງ 05(ຫ້າ) ແມັດຂຶ້ນໄປ ແລະ ມີໜ້າຕ້າງແຕ່ 10(ສິບ) ຊັງຕີແມັດ ຂຶ້ນໄປ.
3. ປ່າພື້ນຟູ ໝາຍເຖິງປ່າໄມ້ ທີ່ຢູ່ໃນສະພາບເຊື່ອມໂຊມ ແຕ່ມີຄວາມອາດສາມາດພື້ນຟູໄດ້ດ້ວຍໂຕມັນເອງ ໂດຍທຳມະຊາດ ເຊັ່ນ: ປ່າເຫລົ່າອ່ອນ ທີ່ໄດ້ຈັດແບ່ງໄວ້ເພື່ອພື້ນຟູລະນະໃຫ້ກາຍເປັນປ່າເຫລົ່າແກ່ ແລະ ກາຍເປັນປ່າທຳມະຊາດທີ່ສົມບູນຄືນໄດ້;
4. ການພື້ນຟູປ່າໄມ້ດ້ວຍທຳມະຊາດ ໝາຍເຖິງການຂະຫຍາຍພັນ ດ້ວຍແກ່ນ, ຮາກ, ເຫງົ້າ ຫຼື ຕໍໄມ້ຕາມທຳມະຊາດ ຂອງພັນໄມ້ຊະນິດຕ່າງໆທີ່ເກີດຢູ່ໃນເຂດພື້ນຟູປ່າໄມ້ ໂດຍການອະນາໄມພື້ນລ່າງ ແລະ